ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 175 / ທຫລ

ນະຄອນຫລວງວຽງຈັນ, ວັນທີ 28 FEB 2017

# ຂໍ້ຕົກລົງ

## ກ່ຽວກັບການປັບປຸງຫລັກການຮັກສາລະດັບເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມຂໍ້ຕົກລົງກ່ຽວກັບການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 877/ທຫລ, ລົງວັນທີ 30 ຕຸລາ 2008;
- ອີງຕາມຂໍ້ຕົກລົງກ່ຽວກັບການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 736/ທຫລ, ລົງວັນທີ 1 ກັນຍາ 2016;
- ອີງຕາມລະບຽບກ່ຽວກັບເງິນແຮຝາກບັງຄັບ ສະບັບເລກທີ 01/ທຫລ, ລົງວັນທີ 21 ເມສາ 2014.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ສ້າງຂຶ້ນມາເພື່ອປັບປຸງຫລັກການຮັກສາລະດັບເງິນແຮຝາກບັງຄັບ ຂອງທະນາຄານທຸລະກິດ ທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດອອກ.

**ມາດຕາ 2 ຫລັກການຮັກສາລະດັບເງິນແຮຝາກບັງຄັບ**

ທະນາຄານທຸລະກິດຕ້ອງຮັກສາເງິນແຮຝາກບັງຄັບໃນແຕ່ລະທ້າຍມື້ ໄວ້ນຳທະນາຄານແຫ່ງ ສປປ ລາວ ໃຫ້ຄົບຖ້ວນດັ່ງນີ້:

1. ສຳລັບສະກຸນເງິນກີບ:

- ເປັນເງິນສົດ (ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ) ບໍ່ຕ່ຳກວ່າຊາວສ່ວນຮ້ອຍ (20%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

– ເປັນຫລັກຊັບທີ່ບໍ່ມີພາລະຜູກພັນ ຫລື ພັນທະບັດ ບໍ່ເກີນແປດສິບສ່ວນຮ້ອຍ (80%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ.

2. ສໍາລັບສະກຸນເງິນຕາຕ່າງປະເທດ:

– ເປັນເງິນສົດ (ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ) ບໍ່ຕໍ່າກວ່າເຈັດສິບຫ້າສ່ວນຮ້ອຍ (75%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ;

– ເປັນຫລັກຊັບທີ່ບໍ່ມີພາລະຜູກພັນ ຫລື ພັນທະບັດ ບໍ່ເກີນຊາວຫ້າສ່ວນຮ້ອຍ (25%) ຂອງເງິນແຮຝາກບັງຄັບທີ່ຕ້ອງຮັກສາໄວ້ໃນແຕ່ລະໄລຍະຮັກສາ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມບໍລິການທະນາຄານ, ກົມບັນຊີ ແລະ ການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນມາດຕາ 9 ຫລັກການຮັກສາລະດັບເງິນແຮຝາກບັງຄັບ ໃນລະບຽບກ່ຽວກັບເງິນແຮຝາກບັງຄັບ ສະບັບເລກທີ 01/ທຫລ, ລົງວັນທີ 21 ເມສາ 2014; ມາດຕາ 4 ຫລັກການຮັກສາລະດັບເງິນແຮຝາກບັງຄັບ ໃນຂໍ້ຕົກລົງກ່ຽວກັບການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 877/ທຫລ, ລົງວັນທີ 30 ຕຸລາ 2008 ແລະ ປ່ຽນແທນຂໍ້ຕົກລົງກ່ຽວກັບການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 736/ທຫລ, ລົງວັນທີ 01 ກັນຍາ 2016 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສອນພາວ ໄຟສິດ